Lao - ຈິດໃຈ ການອະທິຖານ ພຣະຄຳພີ - Soul Scriptures

ມັດທາຍ 11:28-30 “ບັນດາຜູ້ທີ່ເຮັກການຫນັກຫນ່ວງແລະແບກພາຣະຫນັກ ຈົ່ງມາຫາເຮົາ ແລະເຮົາຈະໃຫ້ພວກທ່ານໄດ້ຮັບຄວາມເຊົາເມື່ອຍ 29 ຈົ່ງເອົາແອກຂອງເຮົາແບກໄວ້ແລ້ວ ຮຽນຮູ້ຈາກເຮົາ ເພາະວ່າເຮົາເປັນຜູ້ໃຈອ່ອນສຸພາບແລະຖ່ອມລົງ ແລ້ວຈິດໃຈຂອງທ່ານຈະ ໄດ້ພົບຄວາມເຊົາເມື່ອຍ 30 ດ້ວຍວ່າແອກຂອງເຮົາກໍພໍເຫມາະ ແລະພາຣະຂອງເຮົາກໍເບົາ”

ປະຖົມການ 2:7 ເມື່ອນັ້ນ ພຣະຜູ້ເປັນເຈົ້າໄດ້ເອົາດິນມາປັ້ນເປັນຮູບຄົນແລ້ວເປົ່າລົມຫາຍໃຈ ໃສ່ຮູດັງໃຫ້ມີຊີວິດ ຮູບປັ້ນນັ້ນກໍກັບກາຍເປັນຄົນທີ່ມີຊີວິດຈິດໃຈ

ປະຖົມການ 34:2,3,8 ເມື່ອເຊເຄມບຸດຊາຍຂອງຮາໂມຣ ຊາວຮີວີຜູ້ເປັນເຈົ້າເມືອງໃນເມືອງນີ້ ເຫັນນາງ ເຂົາຈຶ່ງຈັບເອົານາງໄປຂົ່ມຂືນ 3 ເຊເຄມໄດ້ກະທຳດ້ວຍຄວາມຮັກ ເຂົາພຍາຍາມ ອີ່ນອອຍແລະປະເລົ້າປະໂລມນາງ 8 ແຕ່ຮາໂມຣ້ໄດ້ເວົ້າຕໍ່ເຂົາວ່າ, “ເຊເຄມບຸດຊາຍຂອງ ຂ້ອຍໄດ້ຫລົງຮັກລູກສາວຂອງເຈົ້າ ຂໍໃຫ້ພວກເຂົາໄດ້ແຕ່ງງານກັນສາ

ຈົດບັນຊີ 21:4 ຊາວອິສຣາເອນໄດ້ອອກຈາກພູໂຮ ໄປຕາມທາງສູ່ທະເລໄມ້ອໍ້ ເມື່ອກຳລັງຍ່າງ ອ້ອມເຂດແດນເອໂດມໄປນັ້ນ ພວກເຂົາເລີ່ມຫມົດຄວາມອົດທົນ

ພຣະບັນຍັດສອງ 4:29 ຖ້າວ່າຢູ່ທີ່ນັ້ນ ພວກທ່ານສແວງຫາພຣະຜູ້ເປັນເຈົ້າຂອງພວກທ່ານ ດ້ວຍຄວາມເຕັມໃຈພວກທ່ານກໍຈະພົບພຣະອົງ

ພວກຜູ້ປົກຄອງ 16:16 ນາງເດລີລາໄດ້ຖາມຢູ່ທຸກມື້ ຈົນແຊມຊັນເບື່ອຫນ່າຍ ແລະຢາກຈະ ຕາຍເສັງຍ້ອນການຮົບກວນຂອງນາງ

1 ຊາມູເອນ 18:1 ເມື່ອຊາອູນ ແລະດາວິດໄດ້ສົນທະນາປາໄສກັນແລ້ວ ໂຍນາທານບຸດຊາຍ ຂອງຊາອູນ ກໍເກີດມີຄວາມນິຍົມຊົມຊອບດາວິດຫລາຍ ແລະກໍມີຄວາມຮັກແພງເຂົາ ຫລາຍອີກ

1 ກະສັດ 1:29 ເຈົ້າຊີວິດຈຶ່ງຊົງກ່າວຕໍ່ນາງວ່າ, “ເຮົາຂໍສັນຍາໃນພຣະນາມຂອງພຣະຜູ້ເປັນເຈົ້າ ຜູ້ຊົງພຣະຊົນຢູ່ ຜູ້ຊົງໄຖ່ເຮົາອອກຈາກຄວາມທຸກລຳບາກທັງປວງ

2 ກະສັດ 4:27 ແລະເມື່ອນາງມາຍັງພູ ເຖິງຄົນຂອງພຣະເຈົ້ານາງກໍກົ້ມຂາບລົງກອດຕີນຂອງ ເອລີຊາ ເກຮາຊີຈຶ່ງຍ່າງເຂົ້າມາຫາທ່ານຈະດຶງເອົານາງອອກໄປ ແຕ່ເອລີຊາບອກວ່າ, “ປ່ອຍ ນາງເທີນ ເຈົ້າບໍ່ເຫັນບໍ່ວ່ານາງມີຄວາມທຸກໃຈອັນໃຫຍ່ຫລວງ ພຣະຜູ້ເປັນເຈົ້າຊົງອຳເຣື່ອງ

ນີ້ໄວ້ ໂດຍບໍ່ໄດ້ບອກໃຫ້ເຮົາຮູ້”

ໂຢບ 7:11 “ເພາະສະນັ້ນ ຂ້າພຣະອົງຈຶ່ງບໍ່ຍັງຍັ້ງປາກຂອງຂ້າພຣະອົງ ຂ້າພຣະອົງຈະເວົ້າດ້ວຍ ຄວາມແຂສນວະທົມແຫ່ງຈິດໃຈຂອງຂ້າພຣະອົງ ຂ້າພຣະອົງຈະຈົ່ມດ້ວຍຄວາມຂົ່ມຂື່ນແຫ່ງ ຈິດໃຈຂອງຂ້າພຣະອົງ

ໂຢບ 14:22 ເຂົາຮູ້ສຶກພຽງຄວາມເຈັບໃນຮ່າງກາຍຂອງຕົນ ແລະເຂົາຄ່ຳຄວນເພື່ອຕົວເຂົາ ເອງ” ໂຢບ 19:2 “ເປັນຫຍັງພວກທ່ານຈຶ່ງເວົ້າທໍຣະມານຂ້າພະເຈົ້າ

ໂຢບ 27:2 “ພຣະເຈົ້າຊົງພຣະຊົນຢູ່ແນ່ສັນໃດ ຄືພຣະອົງຜູ້ຊົງນຳຄວາມຍຸດຕິທັມອັນຄວນຕົກ ແກ່ຂ້າພະເຈົ້າໄປເສັຍ ແລະອົງຜູ້ມີອຳນາດຍິ່ງໃຫຍ່ຊົງພຣະຊົນຢູ່ສັນໃດ ຄືຜູ້ຊົງທຳໃຈຂ້າພະ ເຈົ້າໃຫ້ຂົມຂື່ນ

ໂຢບ 30:25 ຂ້າພະເຈົ້າບໍ່ໄດ້ຮ້ອງໄຫ້ເພື່ອຜູ້ທີ່ວັນເວລາຂອງເຂົາທຸກໄຮ້ເຂັນໃຈຫລື ຈິດໃຈຂອງ ຂ້າພະເຈົ້າບໍ່ໄດ້ໂສກສລົດເພື່ອຄົນຂັດສົນຫລື

ເພງສັຣເສີນ 6:3,4ທັງຈິດໃຈຂອງຂ້າພຣະອົງກໍທຸກຍາກລຳບາກຫລາຍ ໂອ ຂ້າແດ່ພຣະຜູ້ເປັນ ເຈົ້າ ອີກດົນປານໃດຫນໍ 4 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຫັນມາຊ່ວຍຊີວິດຂອງຂ້າພຣະອົງ ໃຫ້ລອດດ້ວຍເຖີດ ຂໍຊົງຊ່ວຍກູ້ຂ້າພຣະອົງ ເພາະເຫັນແກ່ຄວາມຮັກຫມັ້ນຄົງຂອງພຣະອົງ

ເພງສັຣເສີນ 7:1,2 ໂອ ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂ້າພຣະອົງວີ້ພັຍຢູ່ໃນພຣະອົງ ຂໍຊົງ ຊ່ວຍຂ້າພຣະອົງໃຫ້ພົ້ນພັຍຈາກຜູ້ໄລ່ຕາມທັງມວນ ຂໍຊົງຊ່ວຍກູ້ຂ້າພຣະອົງ 2 ຢ້ານວ່າເຂົາ ຈະຈີກຂ້າພຣະອົງເສັຽດັ່ງສິງ ແລະລາກຂ້າພຣະອົງໄປ ໂດຍບໍ່ມີຜູ້ໃດຊ່ວຍໄດ້

ເພງສັຣເສີນ 17:13 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງລຸກຂຶ້ນຂັດຂວາງເຂົາໄວ້ ແລະຄວ່ຳເຂົາລົງ ເສັຽ ຂໍຊົງຊ່ວຍກູ້ຊີວິດຂອງຂ້າພຣະອົງໃຫ້ພົ້ນຈາກຄົນອະທັມດ້ວຍດາບຂອງພຣະອົງ

ເພງສັຣເສີນ 23:3 ພຣະອົງຊົງໃຫ້ຂ້າພຣະອົງມີແຮງຂຶ້ນໃຫມ່ ແລະຊົງພາຂ້າພຣະອົງໄປໃນທາງ ທີ່ຖືກຕ້ອງຕາມທີ່ພຣະອົງຊົງສັນຍາໄວ້

ເພງສັຣເສີນ 25:20 ຂໍຊົງປົກປັກຮັກສາ ແລະຊ່ວຍຂ້າພຣະອົງໃຫ້ພົ້ນພັຍ ແລະຢ່າໃຫ້ຂ້າພຣະ ອົງຜ່າຍແພ້ ເພາະວ່າຂ້າພຣະອົງເຂົ້າມາເພິ່ງພາອາໄສພຣະອົງ

ເພງສັຣເສີນ 33:19 ພຣະອົງຊົງຊ່ວຍເຂົາໃຫ້ພົ້ນຈາກຄວາມຕາຍ ແລະຊົງຄຸ້ມຄອງໃຫ້ເຂົາມີຊີ ວິດຢູ່ຕໍ່ໄປໃນເວລາອຶດຍາກ

ເພງສັຣເສີນ 34:22 ພຣະຜູ້ເປັນເຈົ້າຊົງຊ່ວຍຜູ້ຮັບໃຊ້ຂອງພຣະອົງໃຫ້ພົ້ນໄພ ຜູ້ທີ່ຢູ່ໃນຄວາມ

ຄຸ້ມຄອງຂອງພຣະອົງຈະພົ້ນໄພ

ເພງສັນລະເສີນ 35:12,13 ເຂົາສນອງຂ້າພຣະອົງໂດຍທາງທຳຊົ່ວຕອບຄວາມດີ ຈິດໃຈຂອງຂ້າພຣະອົງກໍສິ້ນຫວັງ 13 ສ່ວນຂ້າພຣະອົງ ເມື່ອເຂົາປ່ວຍ ຂ້າພຣະອົງໃສ່ຜ້າກະສອບ ຂ້າພຣະອົງຂົ່ມໃຈຕົນເອງດ້ວຍການອົດອາຫານ ຂ້າພຣະອົງກົ້ມຫນ້າລົງທີ່ເອີກອ້ອນວອນ

ເພງສັນລະເສີນ 41:4 ສ່ວນຂ້າພຣະອົງ ຂ້າພຣະອົງທູນວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງພຣະກະຣຸນາແກ່ຂ້າພຣະອົງ ຂໍຊົງຮັກສາຂ້າພຣະອົງເພາະຂ້າພຣະອົງໄດ້ທຳບາບຕໍ່ພຣະອົງ”

ເພງສັນລະເສີນ 42:5 ເປັນຫຍັງຂ້າພຣະອົງຈຶ່ງໂສກເສົ້າ? ເປັນຫຍັງຂ້າພຣະອົງຈຶ່ງທຸກລຳບາກ? ຂ້າພຣະອົງຈະມອບຄວາມຫວັງໄວ້ກັບພຣະເຈົ້າ ແລະຂ້າພຣະອົງຍັງຈະສັນລະເສີນພຣະອົງ ພຣະຜູ້ຊ່ວຍໃຫ້ພົ້ນພັຍ ແລະພຣະເຈົ້າຂອງຂ້າພຣະອົງ (ເພງສັນລະເສີນ 42:6,11; 43:5)

ເພງສັນລະເສີນ 56:13 ເພາະພຣະອົງຊົງຊ່ວຍກູ້ຈິດວິນຍານຂອງຂ້າພຣະອົງຈາກມັດຈຸຣາຊ ພຣະອົງຊົງຊ່ວຍກູ້ຕີນຂອງຂ້າພຣະອົງຈາກການລົ້ມບໍ່ແມ່ນຫລື ເພື່ອຂ້າພຣະອົງຈະດຳເນີນຢູ່ຕໍ່ເບື້ອງພຣະພັກພຣະເຈົ້າໃນຄວາມສວ່າງແຫ່ງຊີວິດ

ເພງສັນລະເສີນ 69:10,18 ເມື່ອຂ້າພຣະອົງຖ່ອມໃຈລົງດ້ວຍການອົດອາຫານ ມັນກາຍເປັນການເຍາະເຍີ້ຍຂ້າພຣະອົງ 18 ຂໍມາໃກ້ຂ້າພຣະອົງ ຊົງໄຖ່ຂ້າພຣະອົງໄວ້ ເພາະສັດຕຣູຂອງຂ້າພຣະອົງ ຂໍຊົງຊ່ວຍກູ້ຂ້າພຣະອົງ

ເພງສັນລະເສີນ 86:13 ເພາະຄວາມຮັກຫມັ້ນຄົງຂອງພຣະອົງທີ່ຊົງມີຕໍ່ຂ້າພຣະອົງນັ້ນຍິ່ງໃຫຍ່ນັກ ແລະພຣະອົງຊົງຊ່ວຍກູ້ຈິດວິນຍານຂອງຂ້າພຣະອົງຈາກທີ່ເວີກຂອງແດນຜູ້ຕາຍ

ເພງສັນລະເສີນ 97:10 ທ່ານຜູ້ທີ່ຮັກພຣະເຈົ້າ ກໍກຽດຊັງຄວາມຊົ່ວ ພຣະອົງຊົງປົກປັກຮັກສາຊີວິດໄພ່ພົນຂອງພຣະອົງ ພຣະອົງຊົງຊ່ວຍໃຫ້ເຂົາພົ້ນຈາກມືຂອງຄົນອະທັມ

ເພງສັນລະເສີນ107:9ພຣະອົງຊົງທຳໃຫ້ຜູ້ຫິວນ້ຳອີ່ມຢ່າງພໍໃຈ ແລະຜູ້ທີ່ຫິວເຂົ້າກໍອີ່ມດ້ວຍຂອງດີ

ເພງສັນລະເສີນ 116:4 ແລ້ວຂ້າພະເຈົ້າຮ້ອງທູນອອກພຣະນາມພຣະຜູ້ເປັນເຈົ້າວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຊ່ວຍຊີວິດຂອງຂ້າພຣະອົງໃຫ້ລອດ”

ເພງສັນລະເສີນ 116:8 ເພາະພຣະອົງຊົງຊ່ວຍກູ້ຂ້າພຣະອົງຈາກມັດຈຸຣາຊ ຊ່ວຍນັຍຕາຂອງຂ້າພຣະອົງຈາກນ້ຳຕາ ຊ່ວຍຕີນຂອງຂ້າພຣະອົງຈາກການລົ້ມ

ເພງສັນລະເສີນ 119:28 ຈິດໃຈຂອງຂ້າພຣະອົງອິດອ່ອນຍ້ອນຄວາມໂສກເສົ້າ ຂໍຊົງໃຫ້ກຳລັງຂ້າພຣະອົງຕາມພຣະວັຈນະຂອງພຣະອົງ

ເພງສັນລະເສີນ 120:2 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງຊ່ວຍໃຫ້ຂ້ານ້ອຍພົ້ນຈາກຄົນຂີ້ຕວະ ແລະຄົນຫລອກລວງ

ເພງສັນລະເສີນ 121:7 ພຣະຜູ້ເປັນເຈົ້າຈະຄຸ້ມຄອງເຈົ້າໃຫ້ພົ້ນຈາກອັນຕະຣາຍທຸກຢ່າງ ພຣະອົງຈະຊົງຊ່ວຍເຈົ້າໃຫ້ປອດພັຍ

ເພງສັນລະເສີນ 124:7 ເຮົາໄດ້ບົບຫນີໄປເຫມືອນນົກທີ່ຫລຸດຫນີຈາກບ້ວງແຮ້ວ ບ້ວງແຮ້ວໄດ້ຂາດໄປແລະເຮົາກໍໄດ້ເປັນອິສຣະ

ເພງສັນລະເສີນ 138:3 ໃນວັນທີ່ຂ້າພຣະອົງຮ້ອງທູນ ພຣະອົງໄດ້ຊົງຕອບຂ້າພຣະອົງ ພຣະອົງຊົງເພີ້ມກຳລັງຈິດໃຈຂອງຂ້າພຣະອົງ

ສຸພາສິດ 6:32 ຊາຍໃດທີ່ລ່ວງປະເວນີຜົວເມັຽ ຍ່ອມບໍ່ມີສາມັນສຳນຶກ ຜູ້ໃດທີ່ກະທຳຢ່າງນັ້ນກໍທຳລາຍຕົນເອງ

ສຸພາສິດ 22:25 ຢ້ານວ່າເຈົ້າຈະຮຽນຮູ້ທາງຂອງເຂົາ ແລະພົວພັນຕົວເຈົ້າເຂົ້າໃນບ້ວງ

ເຢເຣມີ 20:13 ຈົ່ງຮ້ອງເພງຖວາຍພຣະຜູ້ເປັນເຈົ້າ ຈົ່ງສັນລະເສີນພຣະຜູ້ເປັນເຈົ້າ ເພາະວ່າພຣະອົງຊົງຊ່ວຍກູ້ຊີວິດຂອງຜູ້ຂັດສົນ ໃຫ້ພົ້ນຈາກມືຂອງຜູ້ກະທຳຄວາມຊົ່ວຮ້າຍ

ເຢເຣມີ 31:25 ເພາະເຮົາຈະໃຫ້ຈິດໃຈທີ່ເມື່ອຍມີແຮງຂຶ້ນ ແລະຈິດໃຈທີ່ອ່ອນຣະທວຍທຸກດວງ ເຮົາຈະໃຫ້ບໍຣິບູນ

ເອເຊກຽນ 13:20,21 “ດ້ວຍເຫດນີ້ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ່, ເຮົາຕໍ່ສູ້ຜ້າຍັນຂອງເຈົ້າ ຊຶ່ງເຈົ້າໃຊ້ລ່າວິນຍານເຫມືອນດັ່ງລ່ານົກ ແລະເຮົາຈະຈີກຜ້າຍັນນັ້ນເສັຽຈາກແຂນຂອງເຈົ້າທັງຫລາຍ ແລະເຮົາຈະປ່ອຍວິນຍານເຫລົ່ານັ້ນໄປ ຄືວິນຍານທີ່ເຈົ້າລ່າເຫມືອນດັ່ງລ່ານົກ 21 ຜ້າຄຸມຂອງເຈົ້າ ເຮົາກໍຈະຈີກເສັຽດ້ວຍ ແລະຊ່ວຍກູ້ໄພ່ພົນຂອງເຮົາໃຫ້ພົ້ນຈາກມືຂອງເຈົ້າ ແລະເຂົາຈະບໍ່ເປັນເຫຍື່ອໃນມືຂອງເຈົ້າຕໍ່ໄປ ແລະເຈົ້າຈະຮູ້ວ່າເຮົາຄືພຣະຜູ້ເປັນເຈົ້າ

ມັດທາຍ 10:28 ຢ່າຊູ່ຢ້ານຜູ້ທີ່ຂ້າໄດ້ແຕ່ຮ່າງກາຍ ແຕ່ຈະຂ້າຈິດວິນຍານບໍ່ໄດ້ ແຕ່ຈົ່ງຢ້ານພຣະອົງຜູ້ຊົງຣິດທີ່ອາດໃຫ້ທັງຈິດວິນຍານແລະຮ່າງກາຍຈິບຫາຍໃນຫມໍ້ນະຮົກ

ມັດທາຍ 16:26 ເຫດວ່າຖ້າຜູ້ໃດຈະໄດ້ສິ່ງຂອງຫມົດທັງໂລກ ແຕ່ຕ້ອງເສັຽຊີວິດອັນແທ້ຂອງຕົນ ຜູ້ນັ້ນຈະໄດ້ປໂຍດອັນໃດ ຫລືຜູ້ນັ້ນຈະນຳເອົາສິ່ງໃດໄປແລກເອົາຊີວິດອັນແທ້ຂອງຕົນກັບຄືນມາ (ມາຣະໂກ 8:36,37)

ມັດທາຍ 22:37 ພຣະເຍຊູຊົງຕອບວ່າ, “ຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດໃຈ ດ້ວຍ
ສຸດຈິດ ແລະດ້ວຍສຸດຄວາມຄິດຂອງເຈົ້າ”

ມັດທາຍ 26:38 ພຣະອົງຊົງກ່າວກັບເຂົາວ່າ, “ຈິດໃຈຂອງເຮົາທຸກຫນັກແທບຈະຕາຍຢູ່ແລ້ວ
ຈົ່ງຄອຍຢູ່ທີ່ນີ້ ເຝົ້າຢູ່ກັບເຮົາເທີນ” (ມາຣະໂກ 14:34)

ມາຣະໂກ 12:30 ແລະພວກເຈົ້າຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດໃຈ ດ້ວຍສຸດຈິດ
ດ້ວຍສຸດຄວາມຄິດ ແລະດ້ວຍສຸດກຳລັງຂອງເຈົ້າ”

ລູກາ 12:20 ແຕ່ພຣະເຈົ້າຊົງກ່າວຕໍ່ຜູ້ນັ້ນວ່າ, “ໂອ ຄົນໂງ່ເອີຍ, ໃນຄືນວັນນີ້ເຂົາຈະເອີ້ນເອົາ
ຈິດໃຈຂອງເຈົ້າໄປຈາກເຈົ້າ ແລ້ວສິ່ງຂອງທັງຫລາຍທີ່ເຈົ້າຈັດແຈງໄວ້ນັ້ນຈະຕົກເປັນຂອງ
ໃຜ”

ລູກາ 21:19 ທ່ານທັງຫລາຍຈະຮັກສາຊີວິດຈິດໃຈຂອງທ່ານໄວ້ດ້ວຍຄວາມອົດຄວາມພຽນ
ຂອງທ່ານ

ໂຍຮັນ 12:27 “ບັດນີ້ຈິດໃຈຂອງເຮົາວຸ້ນວາຍແລະເຮົາຈະວ່າຢ່າງໃດ ຈະວ່າ “ໂອ ພຣະບິດາເອີຍ,
ຂໍໃຫ້ຂ້າພຣະອົງລອດພົ້ນຈາກຍາມນີ້ທ້ອນ” ຢ່າງນັ້ນຫລື ກໍວ່າບໍ່ໄດ້ ທີ່ເຮົາໄດ້ມາເຖິງຍາມ
ນີ້ກໍເພື່ອການນີ້ແຫລະ

ກິຈການ 14:22 ໄດ້ເຮັດໃຫ້ໃຈລູກສິດທັງຫລາຍຕັ້ງຫມັ້ນຄົງຢູ່ ຕັກເຕືອນເຂົາໃຫ້ດຳຣົງຢູ່ໃນ
ພຣະສາສນາ ແລະກ່າວວ່າ, “ເພື່ອຈະເຂົ້າໃນແຜ່ນດິນຂອງພຣະເຈົ້າ ເຮົາທັງຫລາຍຈຳເປັນ
ຕ້ອງຜ່ານຄວາມທຸກລຳບາກຫລາຍປະການ

ກິຈການ 15:24 “ດ້ວຍພວກເຮົາໄດ້ຍິນຂ່າວວ່າມີລາງຄົນໃນພວກເຮົາ ໄດ້ໄປຮົບກວນ ແລະ
ເຮັດໃຫ້ໃຈຂອງພວກທ່ານປັ່ນປ່ວນໄປ ດ້ວຍຖ້ອຍຄຳທີ່ເຮົາບໍ່ໄດ້ສັ່ງເຂົາ

1 ໂກຣິນໂທ 15:45 ມີຄຳຂຽນໄວ້ໃນພຣະຄັມພີວ່າ, “ມະນຸດຄົນເດີມຄືອາດາມນັ້ນໄດ້ບັງເກີດ
ເປັນຜູ້ມີຊີວິດຢູ່” ອາດາມຜູ້ສຸດທ້າຍຄືພຣະວິນຍານຜູ້ປະທານຊີວິດ

1 ເທຊະໂລນິກ 5:23 ຂໍໃຫ້ພຣະເຈົ້າຜູ້ຊົງໂຜດປະທານສັນຕິສຸກນັ້ນ ຈົ່ງຊົງບັນດານໃຫ້ເຈົ້າທັງ
ຫລາຍເປັນຄົນບໍຣິສຸດຮຽບຮ້ອຍ ແລະຊົງຮັກສາວິນຍານ ຈິດໃຈ ແລະກາຍຂອງພວກເຈົ້າ
ໄວ້ບໍ່ໃຫ້ມີຂໍ້ຕິຕຽນໄດ້ ໃນເມື່ອອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ ຄືພຣະເຍຊູຄຣິດຈະ
ສະເດັດມາປາກົດ

ເຮັບເຣີ 6:19 ຄວາມຫວັງທີ່ພວກເຮົາຍຶດຖືນັ້ນເປັນສມໍທີ່ແທ້ຈິງແລະຫມັ້ນຄົງຂອງຈິດໃຈ

ຄວາມຫວັງນັ້ນນຳໄປສູ່ບ່ອນສັກສິດທີ່ສຸດຢູ່ເບື້ອງຫລັງຜ້າກັ້ງ

ເຮັບເຣີ 10:39 ສ່ວນພວກເຮົາ, ບໍ່ຢູ່ຝ່າຍຄົນທີ່ຫລົບຖອຍຫລັງຈົນເຖິງຄວາມຈິບຫາຍເສັ່ງ ແຕ່ຢູ່ຝ່າຍຄົນທີ່ມີຄວາມເຊື່ອ ຈຶ່ງຮັກສາຊີວິດແລະຈິດໃຈຂອງຕົນໄວ້ໄດ້

ຢາໂກໂບ 1:21 ເຫດສັນນັ້ນ ຈົ່ງເວີກຈາກຄວາມຊົ່ວມົວຫມອງທຸກຢ່າງ ແລະຄວາມຊົ່ວຮ້າຍ ອັນເຫລືອຫລາຍ ຈົ່ງນ້ອມໃຈຮັບເອົາພຣະທັມທີ່ປູກຝັງໄວ້ແລ້ວນັ້ນ ຊຶ່ງສາມາດຊ່ອຍຈິດ ວິນຍານຂອງພວກທ່ານໃຫ້ພົ້ນໄດ້

ຢາໂກໂບ 5:20 ຈົ່ງຮູ້ວ່າຜູ້ທີ່ເຮັດໃຫ້ຄົນບາບຄົນນຶ່ງຕ່າວຄືນມາຈາກທາງຜິດຂອງຕົນນັ້ນ ກໍໄດ້ຊ່ອຍຈິດວິນຍານຂອງຄົນນັ້ນໃຫ້ພົ້ນຈາກຄວາມຕາຍ ແລະທັງໃຫ້ຄວາມຜິດບາບຈຳນວນ ຫລວງຫລາຍໄດ້ຮັບຄວາມອະພັຍ

1 ເປໂຕ 1:9,22 ແລ້ວທ່ານທັງຫລາຍຈຶ່ງໄດ້ຮັບຕາມຈຸດປະສົງແຫ່ງຄວາມເຊື່ອຂອງພວກ ທ່ານ ຄືວິນຍານຈິດຂອງພວກທ່ານຈະໄດ້ລອດພົ້ນ 22 ທີ່ທ່ານທັງຫລາຍໄດ້ຊຳຣະຈິດໃຈ ຂອງຕົນໃຫ້ບໍຣິສຸດດ້ວຍຄວາມເຊື່ອຟັງຄວາມຈິງ ຈົນມີຄວາມຮັກພວກພີ່ນ້ອງຢ່າງຈິງໃຈ, ພວກທ່ານຈົ່ງຮັກເຊິ່ງກັນແລະກັນດ້ວຍເຕັມໃຈ

1 ເປໂຕ 2:11 ທ່ານທີ່ຮັກທັງຫລາຍເອີຍ, ຂ້າພະເຈົ້າຂໍເຕືອນສະຕິພວກທ່ານ ເຫມືອນເປັນຄົນ ຕ່າງຊາດທີ່ທ່ອງທ່ຽວໃນໂລກນີ້ ໃຫ້ງົດເວັ້ນຈາກຕັນຫາແນວມະນຸດ ຊຶ່ງທຳເສີກຕໍ່ສູ້ຈິດວິນ ຍານ

1 ເປໂຕ 4:19 ເຫດສັນນັ້ນໃຫ້ຄົນທັງຫລາຍທີ່ທົນທຸກທໍຣະມານຕາມນ້ຳພຣະທັຍຂອງພຣະ ເຈົ້າ ຈົ່ງຝາກຈິດວິນຍານຂອງຕົນໄວ້ກັບພຣະອົງ ດ້ວຍການປະຕິບັດອັນດີ ຄືໃຫ້ຝາກໄວ້ ກັບພຣະອົງຜູ້ຊົງສ້າງ ຜູ້ທ່ຽງທັມ

2 ເປໂຕ 2:7,8 ແລະໄດ້ຊົງໂຜດເອົາໂລດຜູ້ຊອບທັມນັ້ນໃຫ້ພົ້ນ ຄືຜູ້ທີ່ມີຄວາມທຸກໃຈຫລາຍ ຍ້ອນກິຣິຍາທີ່ຂາດສິນທັມຂອງຄົນຊົ່ວເຫລົ່ານັ້ນ 8 (ເພາະເມື່ອຄົນຊອບທັມຜູ້ນີ້ຢູ່ໃນຫມູ່ ຄົນຊົ່ວນັ້ນ ການອະທັມຂອງເຂົາທີ່ທ່ານໄດ້ເຫັນແລະໄດ້ຍິນ ກໍເຮັດໃຫ້ຈິດໃຈທີ່ຊອບທັມ ຂອງຕົນເປັນທຸກລຳບາກທຸກໆວັນ)

3 ໂຍຮັນ 1:2 ທ່ານທີ່ຮັກເອີຍ, ຂ້າພະເຈົ້າອ້ອນວອນຂໍໃຫ້ທ່ານຈະເຣີນດີຂຶ້ນໃນທຸກສິ່ງ ແລະມີສຸ ຂພາບແຂງແຮງເຫມືອນຢ່າງຈິດວິນຍານຂອງທ່ານຈະເຣີນດີຢູ່ນັ້ນ